ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ນະຄອນຫຼວງວຽງຈັນ ເລກທີ: 1154 /ຈນວ

ວັນທີ: 3 NOV 2018

# ຂໍ້ຕົກລົງ

## ວ່າດ້ວຍການຮັບຮອງເອົາຫົວໜ່ວຍລາຄາທົດແທນຜົນກະທົບ ຈາກໂຄງການກໍ່ສ້າງສາຍສົ່ງໄຟຟ້າແຮງສູງ 115 ກວ ສະຖານີໄຟຟ້ານາໄຊ ຫາ ສະຖານີໄຟຟ້າດົງໂພສີ ນະຄອນຫຼວງວຽງຈັນ

- ອີງຕາມ ມາດຕາ 19,20 ໝວດ IV ຂອງກົດໝາຍວ່າດ້ວຍການປົກຄອງທ້ອງຖິ່ນ (ສະບັບປັບປຸງ) ສະບັບເລກທີ 68/ສພຊ, ລົງວັນທີ 14 ທັນວາ 2015 ວ່າດ້ວຍພາລະບົດບາດ, ສິດ ແລະ ໜ້າທີ່ຂອງເຈົ້າແຂວງ, ເຈົ້າຄອງນະຄອນ;
- ອີງຕາມ ມາດຕາ 26 ຂອງກົດໝາຍວ່າດ້ວຍໄຟຟ້າ (ສະບັບປັບປຸງ) ສະບັບເລກທີ 06/ສພຊ, ລົງວັນທີ 09 ມິຖຸນາ 2017;
- ອີງຕາມ ດຳລັດວ່າດ້ວຍການທົດແທນຄ່າເສຍຫາຍ ແລະ ການຍົກຍ້າຍຈັດສັນປະຊາຊົນຈາກໂຄງການພັດທະນາ ສະບັບເລກທີ 84/ລບ, ລົງວັນທີ 30 ເມສາ 2016;
- ອີງຕາມ ມະຕິກອງປະຊຸມຄະນະປະຈຳສະພາປະຊາຊົນ ນະຄອນຫຼວງວຽງຈັນ ສະບັບເລກທີ 141/ຄປຈ.ສປນວ, ລົງວັນທີ 30 ຕຸລາ 2018;
- ອີງຕາມ ຂໍ້ຕົກລົງ ວ່າດ້ວຍການແຕ່ງຕັ້ງຄະນະກຳມະການປະສານງານ ແລະ ຊຸກຍູ້ໂຄງການສາຍສົ່ງ 115/22ກວ ແຕ່ສະຖານີໄຟຟ້າດົງໂພສີ ຫາ ສະຖານີໄຟຟ້ານາໄຊ ສະບັບເລກທີ 1015/ຈນວ, ລົງວັນທີ 13 ຕຸລາ 2016;
- ອີງຕາມ ການຢັ້ງຢືນ ແລະ ນຳສະເໜີຂອງພະແນກພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ນວ ສະບັບເລກທີ 3559/ພຊສ.ນວ, ລົງວັນທີ 04 ຕຸລາ 2018; ພະແນກໂຍທາທິການ ແລະ ຂົນສົ່ງ ນວ ສະບັບເລກທີ 5209/ຍທຂ.ນວ, ລົງວັນທີ 15 ຕຸລາ 2018 ແລະ ພະແນກກະສິກຳ ແລະ ປ່າໄມ້ ນວ ສະບັບເລກທີ 4116/ກປ.ນວ, ລົງວັນທີ 01 ຕຸລາ 2018 ກ່ຽວກັບການກຳນົດຫົວໜ່ວຍລາຄາທົດແທນຜົນກະທົບຈາກໂຄງການ;
- ອີງຕາມ ໜັງສືສະເໜີຂອງພະແນກພະລັງງານ ແລະ ບໍ່ແຮ່ ນະຄອນຫຼວງວຽງຈັນ ສະບັບເລກທີ 1165/ພບ.ນວ, ລົງວັນທີ 18 ຕຸລາ 2018.

## ເຈົ້າຄອງນະຄອນຫຼວງວຽງຈັນ ອອກຂໍ້ຕົກລົງ:

ມາດຕາ 01 ຈຸດປະສົງ ແລະ ຂອບເຂດນຳໃຊ້.

ເຫັນດີຮັບຮອງເອົາການກຳນົດລະບຽບ, ຫຼັກການ ການທົດແທນຄ່າເສຍຫາຍ, ສິດໃຊ້, ສິດນຳໃຊ້ທີ່ດິນ, ສິ່ງປຸກສ້າງ, ຜົນລະປູກ ແລະ ການພັດທະນາອື່ນໆ ທີ່ຢູ່ໃນເຂດສະຫງວນຂອງໂຄງການກໍ່ສ້າງສາຍສົ່ງໄຟຟ້າແຮງສູງ 115 ກວ ແຕ່ສະຖານີໄຟຟ້ານາໄຊ ຫາ ສະຖານີໄຟຟ້າດົງໂພສີ ນະຄອນຫຼວງວຽງຈັນ ເພື່ອເປັນການປຸກລະດົມປະຊາຊົນທີ່ຖືກຜົນກະທົບຈາກໂຄງການດັ່ງກ່າວ ໃຫ້ຮັບຮູ້ ແລະ ເຂົ້າໃຈຕໍ່ແນວທາງນະໂຍບາຍຂອງລັດຖະບານໃນການພັດທະນາ, ມີຄວາມຈິງໃຈປະກອບສ່ວນສ້າງສາພັດທະນາ. ແນໃສ່ຮັບປະກັນໃຫ້ຜູ້ຖືກຜົນກະທົບໄດ້ຮັບການທົດແທນຄ່າເສຍຫາຍ, ການຈັດສັນຍົກຍ້າຍ, ປັບປຸງຊີວິດການເປັນຢູ່ໃຫ້ດີຂຶ້ນກວ່າເກົ່າ ຫຼື ເທົ່າເດີມ ຢ່າງສົມເຫດສົມຜົນ ແລະ ສອດ

ຄ່ອງຕາມດຳລັດ ສະບັບເລກທີ 84/ລບ, ລົງວັນທີ 30 ເມສາ 2016 ວ່າດ້ວຍການທົດແທນຄ່າເສຍຫາຍ ແລະ ການຍົກຍ້າຍຈັດສັນປະຊາຊົນຈາກໂຄງການພັດທະນາ ກຳນົດໄວ້ ແລະ ເປັນພື້ນຖານໃນການຄົ້ນຄ້ວາ, ເກັບກຳຂໍ້ມູນ ແລະ ວາງຫົວໜ່ວຍລາຄາທົດແທນຄ່າເສຍຫາຍໃຫ້ຜູ້ຖືກຜົນກະທົບ.

**ມາດຕາ 02 ຫຼັກການທົດແທນຄ່າເສຍຫາຍ ແລະ ເຂດສະຫງວນ.**

2.1 ກຳນົດຫຼັກການວິທີຄິດໄລ່ຫົວໜ່ວຍລາຄາທົດແທນ ໂດຍຖືເອົາຂໍ້ມູນການຊື້-ຂາຍຕົວຈິງຂອງແຕ່ລະເຂດ ມາບວກກັບການປະເມີນມູນຄ່າທີ່ດິນ ຕາມຂໍ້ຕົກລົງສະບັບເລກທີ 352/ສນຍ.ອຄດຊ, ລົງວັນທີ 31 ພຶດສະພາ 2011, ໂຄງການກໍ່ສ້າງສາຍສົ່ງແຮງສູງ 230 ກວ ນາບົງ-ນ້ຳງື່ມ1-ທົ່ງເທັບ ສະບັບເລກທີ 0775/ຈນວ, ລົງວັນທີ 5 ສິງຫາ 2015 ທີ່ນຳໃຊ້ສຳລັບການຈົດທະບຽນມອບ-ຮັບ ສິດນຳໃຊ້ທີ່ດິນປະຈຸບັນມາສະເລ່ຍເປັນລາຄາທົດແທນ.

2.2 ເຂດສະຫງວນໂຄງການກໍ່ສ້າງສາຍສົ່ງໄຟຟ້າແຮງສູງ 115 ກວ ແຕ່ສະຖານີໄຟຟ້ານາໄຫ ຫາ ສະຖານີໄຟຟ້າດົງໂພສີ ນະຄອນຫຼວງວຽງຈັນ ມີຄວາມຍາວທັງໝົດ 9,2 Km, ຄວາມກ້ວາງຂອງແລວສາຍສົ່ງໄຟຟ້າ 25 ແມັດ, ເນື້ອທີ່ຖືກຜົນກະທົບ ຈາກແລວສາຍສົ່ງ 230.000 $m^2$, ມີເສົາ 32 ຕົ້ນ, ເນື້ອທີ່ຖືກຜົນກະທົບຕີນເສົາ 846 $m^2$, ມີຜົນກະທົບ 2 ເມືອງ ຈຳນວນ 4 ບ້ານ, 44 ຄອບຄົວຄື: ເມືອງຫາດຊາຍຟອງ ຈຳນວນ 2 ບ້ານ: ບ້ານນາໄຫ 3 ຄອບຄົວ, ບ້ານດົງໂພສີ 2 ຄອບຄົວ ແລະ ເມືອງໄຊເສດຖາ ຈຳນວນ 2 ບ້ານ: ບ້ານດົງຄຳຊ້າງ 27 ຄອບຄົວ ແລະ ບ້ານຊຽງດາ 12 ຄອບຄົວ ເຊິ່ງເຂດເຫຼົ່ານັ້ນ ຈະຖືກຈັດເຂົ້າເຂດສະຫງວນຂອງໂຄງການ.

ທີ່ດິນທີ່ເຫຼືອຈາກການທົດແທນຄືນ ໂຄງການຈະເປັນຜູ້ຮັບຜິດຊອບອອກຄ່າໃຊ້ຈ່າຍໃນການດັດແກ້ ແລະ ອອກໃບຕາດິນໃໝ່ໃຫ້ຜູ້ຖືກຜົນກະທົບໃນສ່ວນທີ່ເຫຼືອ, ທີ່ດິນທີ່ຍັງເຫຼືອໜ້ອຍ ຫຼື ຫຼາຍ ຍັງເປັນສິດໃຊ້, ສິດນຳໃຊ້ທີ່ຖືກຕ້ອງຕາມກົດໝາຍຂອງເຈົ້າຂອງຊັບສິນຜູ້ຖືກຜົນກະທົບ.

ໂຄງການກຳນົດຫຼັກການທົດແທນສິ່ງປຸກສ້າງ ແລະ ພືນລະປູກ ໃຫ້ຜູ້ຖືກຜົນກະທົບສາມາດຍ້າຍອອກໄດ້ໂດຍນຳໃຊ້ເງິນທີ່ໄດ້ຮັບຈາກການທົດແທນ, ການຍົກຍ້າຍສິ່ງປຸກສ້າງ, ການຕັດຕົ້ນໄມ້ໄປນຳໃຊ້ຕໍ່ ແລະ ຈະຕ້ອງປະຕິບັດໃຫ້ທັນຕາມກຳນົດເວລາທີ່ໂຄງການໄດ້ວາງໄວ້.

**2.3. ຫົວໜ່ວຍລາຄາທົດແທນສິດໃຊ້ ແລະ ສິດນຳໃຊ້ທີ່ດິນ.**

ຫົວໜ່ວຍລາຄາທົດແທນສິດໃຊ້ ແລະ ສິດນຳໃຊ້ທີ່ດິນ ເຂດໂຄງການກໍ່ສ້າງສາຍສົ່ງໄຟຟ້າແຮງສູງ 115 ກວ ແຕ່ສະຖານີໄຟຟ້ານາໄຫ ຫາ ສະຖານີໄຟຟ້າດົງໂພສີ ນະຄອນຫຼວງວຽງຈັນ (ລາຍລະອຽດມີຂໍ້ກຳນົດຂອງພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ນະຄອນຫຼວງວຽງຈັນ ສະບັບເລກທີ 3559/ພຊສ.ນສ, ລົງວັນທີ 04 ຕຸລາ 2018 ຄັດຕິດມາພ້ອມນີ້).

**2.4 ຫົວໜ່ວຍລາຄາທົດແທນຄ່າເສຍຫາຍສິ່ງປຸກສ້າງ.**

ລາຄາຫົວໜ່ວຍລາຄາທົດແທນຄ່າເສຍຫາຍສິ່ງປຸກສ້າງ ເຂດໂຄງການກໍ່ສ້າງສາຍສົ່ງໄຟຟ້າແຮງສູງ 115 ກວ ສະຖານີໄຟຟ້ານາໄຫ ຫາ ສະຖານີໄຟຟ້າດົງໂພສີ ນະຄອນຫຼວງວຽງຈັນ (ລະອຽດມີເອກະສານຂອງພະແນກໂຍທາທິການ ແລະ ຂົນສົ່ງ ນະຄອນຫຼວງວຽງຈັນ ສະບັບເລກທີ 5209/ຍທຂ.ນວ, ລົງວັນທີ 15 ຕຸລາ 2018 ຄັດຕິດມາພ້ອມນີ້).

**2.5 ຫົວໜ່ວຍລາຄາທົດແທນຄ່າເສຍຫາຍຂອງພືນລະປູກ.**

ລາຄາຫົວໜ່ວຍລາຄາທົດແທນຄ່າເສຍຫາຍຂອງຜົນລະປູກ ເຂດໂຄງການກໍ່ສ້າງສາຍສົ່ງໄຟຟ້າແຮງສູງ 115 ກວ ສະຖານີໄຟຟ້ານາໄຫ ຫາ ສະຖານີໄຟຟ້າດົງໂພສີ ນະຄອນຫຼວງວຽງຈັນ (ລະອຽດມີຂໍ້ກຳນົດຂອງພະແນກກະສິກຳ ແລະ ປ່າໄມ້ ນະຄອນຫຼວງວຽງຈັນ ສະບັບເລກທີ 4116/ກປ.ນວ, ລົງວັນທີ 01 ຕຸລາ 2018 ຄັດຕິດມາພ້ອມນີ້).

**ມາດຕາ 03 ແຫຼ່ງທຶນໃນການທົດແທນ.**

ງົບປະມານໃນການທົດແທນ ແມ່ນເປັນຄວາມຮັບຜິດຊອບຂອງເຈົ້າຂອງໂຄງການ ໂດຍນຳໃຊ້ງົບປະມານ ໂຄງການກໍ່ສ້າງສາຍສົ່ງໄຟຟ້າແຮງສູງ 115 ກວ ສະຖານີໄຟຟ້ານາໄຫ ຫາ ສະຖານີໄຟຟ້າດົງໂພສີ ນະຄອນຫຼວງວຽງຈັນ.

**ມາດຕາ 04 ສະຖານທີ່ ແລະ ວິທີທົດແທນ.**

4.1 ຜູ້ໄດ້ຮັບຜົນກະທົບຈາກໂຄງການ ສາມາດສະເໜີຮັບການທົດແທນໄດ້ຈາກຄະນະຮັບຜິດຊອບໂຄງການ ໂດຍແມ່ນຄະນະກຳມະການປະສານງານ ແລະ ຊຸກຍູ້ໂຄງການສາຍສົ່ງ 115/22ກວ ແຕ່ສະຖານີໄຟຟ້າດົງໂພສີ ຫາ ສະຖານີໄຟຟ້ານາໄຫ ຂັ້ນເມືອງໄຊເສດຖາ ແລະ ເມືອງຫາດຊາຍຟອງ ເປັນຜູ້ຕິດຕາມ ແລະ ກວດກາການທົດແທນດັ່ງກ່າວ.

4.2 ວິທີທົດແທນຄ່າເສຍຫາຍສິດໃຊ້, ສິດນຳໃຊ້ທີ່ດິນ, ສິ່ງປຸກສ້າງ ແລະ ຜົນລະປູກ ຈະມີບົດບັນທຶກລະຫວ່າງ ຜູ້ໄດ້ຮັບຜົນກະທົບ ແລະ ລັດວິສາຫະກິດໄຟຟ້າລາວ ໂດຍໄດ້ຮັບການຢັ້ງຢືນ, ຮັບຮອງຈາກຄະນະກຳມະການປະສານງານ ແລະ ຊຸກຍູ້ໂຄງການສາຍສົ່ງ 115/22ກວ ແຕ່ສະຖານີໄຟຟ້າດົງໂພສີ ຫາ ສະຖານີໄຟຟ້ານາໄຫ, ຊຶ່ງມູນຄ່າທົດແທນທີ່ຖືກຜົນກະທົບ ພາຍຫຼັງທີ່ໄດ້ຮັບຮອງເອົາຄ່າທົດແທນແລ້ວ ຈະໄດ້ໂອນເງິນສົດເຂົ້າບັນຊີເງິນຝາກ ຢູ່ທະນາຄານທີ່ໂຄງການເປີດໃຫ້ສະເພາະ ຫຼື ບັນຊີຂອງຜູ້ຖືກຜົນກະທົບ ຊຶ່ງຕ້ອງຜ່ານການກວດກາຈາກຄະນະກຳມະການທຸກຄັ້ງກ່ອນຈະມີການໂອນ, ທະນາຄານທີ່ໂອນເງິນໃຫ້ແກ່ຜູ້ທີ່ໄດ້ຮັບຜົນກະທົບ ຕ້ອງແມ່ນທະນາຄານທີ່ຢູ່ໃກ້ກັບເຈົ້າຂອງຊັບສິນທີ່ສຸດ ຫຼື ສະດວກທີ່ສຸດ ເພື່ອໃຫ້ມີຄວາມສະດວກໃນການເຄື່ອນໄຫວທາງດ້ານການເງິນ.

ການຈ່າຍເງິນທົດແທນຈະປະຕິບັດ ພາຍຫຼັງທີ່ຄະນະກຳມະການ ຂັ້ນເມືອງ ໄດ້ປະເມີນມູນຄ່າຊັບສິນ ແລະ ເປັນເອກະພາບກັບເຈົ້າຂອງຊັບສິນ ຫຼື ຜູ້ທີ່ໄດ້ຮັບຜົນກະທົບແລ້ວ ຈະໄດ້ນຳສະເໜີໃຫ້ຫົວໜ້າຄະນະກຳມະການ ຂັ້ນນະຄອນຫຼວງວຽງຈັນ ຮັບຮອງຢ່າງເປັນທາງການ.

ກໍລະນີຜູ້ຖືກຜົນກະທົບບໍ່ຍອມຮັບເອົາການຊົດເຊີຍ ແຕ່ໂຄງການສາມາດດຳເນີນການຕໍ່ໄດ້ ໂດຍໃຫ້ເຈົ້າຂອງໂຄງການ ໂອນເງິນຊົດເຊີຍເຂົ້າບັນຊີກາງໄວ້ກ່ອນ ລໍຖ້າການຮັບເອົາຂອງເຈົ້າຂອງຊັບສິນ.

**ມາດຕາ 05 ການແກ້ໄຂຂໍ້ຂັດແຍ້ງ.**

ກໍລະນີຂໍ້ຂັດແຍ້ງທີ່ເກີດຈາກການບໍ່ໄດ້ຮັບຄ່າທົດແທນຕາມມູນຄ່າທີ່ຕົກລົງກັນເປັນລາຍລັກອັກສອນ ຫຼື ກໍລະນີອື່ນໆ ທີ່ກ່ຽວຂ້ອງກັບການທົດແທນຄ່າເສຍຫາຍສິດໃຊ້, ສິດນຳໃຊ້ທີ່ດິນ, ສິ່ງປຸກສ້າງ ແລະ ຜົນລະປູກ ໃນເຂດສະຫງວນຂອງໂຄງການ ຜູ້ຖືກຜົນກະທົບມີສິດສະເໜີແກ້ໄຂຂໍ້ຂັດແຍ່ງເຖິງຄະນະກຳມະການຂັ້ນເມືອງ ແລະ ຂັ້ນນະຄອນຫຼວງວຽງຈັນ ເພື່ອຄົ້ນຄວ້າ ແລະ ພິຈາລະນາແກ້ໄຂ.

**ມາດຕາ 06 ການຈັດຕັ້ງປະຕິບັດ.**

ມອບໃຫ້ຄະນະກຳມະການປະສານງານ ແລະ ຊຸກຍູ້ໂຄງການສາຍສົ່ງ 115/22ກວ ແຕ່ສະຖານີໄຟຟ້າດົງໂພສີ ຫາ ສະຖານີໄຟຟ້ານາໄຫ, ອົງການປົກຄອງເມືອງຫາດຊາຍຟອງ, ເມືອງໄຊເສດຖາ, ພະແນກພະລັງງານ ແລະ ບໍ່ແຮ່, ພະ ແນກການເງິນ, ພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ, ພະແນກໂຍທາທິການ ແລະ ຂົນສົ່ງ, ພະ

ແນກກະສິກຳ ແລະ ປ່າໄມ້, ພະແນກແຜນການ ແລະ ການລົງທຶນ ນະຄອນຫຼວງວຽງຈັນ, ແລະ ທຸກການຈັດຕັ້ງຂອງ ພັກ-ລັດ ແລະ ສັງຄົມທີ່ກ່ຽວຂ້ອງ ມີໜ້າທີ່ໂຄສະນາ, ປະຊາສຳພັນ ແລະ ປຸກລະດົມປະຊາຊົນທີ່ຖືກຜົນກະທົບ ໃຫ້ເຂົ້າໃຈ ແລະ ໃຫ້ການປະກອບສ່ວນເຂົ້າໃນການພັດທະນາລວມຂອງລັດຖະບານ ທີ່ວາງໄວ້ໃຫ້ມີຄວາມສະຫງົບ ແລະ ໄດ້ຮັບຜົນດີ.

**ມາດຕາ 08 ຜົນສັກສິດ.**

ຂໍ້ຕົກລົງສະບັບນີ້ມີຜົນສັກສິດ ແລະ ນຳໃຊ້ໄດ້ນັບຕັ້ງແຕ່ມື້ລົງລາຍເຊັນ ແລະ ພາຍຫຼັງໄດ້ລົງຈົດໝາຍເຫດທາງລັດຖະການ 15 ວັນເປັນຕົ້ນໄປ.

ເຈົ້າຄອງນະຄອນຫຼວງວຽງຈັນ

ແກ້ວພີລາວັນ ອາໄພລາດ

**ບ່ອນສົ່ງ:**

- ເຈົ້າຄອງ - ຮອງເຈົ້າຄອງ ນວ ທ່ານລະ 01 ສະບັບ;
- ຄະນະເລຂາທິການສະພາປະຊາຊົນ ນວ ທ່ານລະ 01 ສະບັບ;
- ຄະນະກຳມະການປະສານງານ - ຊຸກຍູ້ໂຄງການສາຍສົ່ງ 115/22 ກວ ແຕ່ສະຖານີໄຟຟ້າດົງໂພສີ ຫາ ສະຖານີໄຟຟ້ານາໄຫຂັ້ນ ນວ ແລະ ຂັ້ນເມືອງ ພາກສ່ວນລະ 01 ສະບັບ;
- ພະແນກພະລັງງານ ແລະ ບໍ່ແຮ່ ນວ 01 ສະບັບ;
- ພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ນວ 01 ສະບັບ;
- ພະແນກໂຍທາທິການ ແລະ ຂົນສົ່ງ ນວ 01 ສະບັບ;
- ພະແນກກະສິກຳ ແລະ ປ່າໄມ້ ນວ 01 ສະບັບ;
- ພະແນກການເງິນ ນວ 01 ສະບັບ;
- ພະແນກແຜນການ ແລະ ການລົງທຶນ ນວ 01 ສະບັບ;
- ເມືອງໄຊເສດຖາ 01 ສະບັບ;
- ເມືອງຫາດຊາຍຟອງ 01 ສະບັບ;
- ນາຍບ້ານກ່ຽວຂ້ອງ ບ້ານລະ 01 ສະບັບ;
- ລັດວິສາຫະກິດໄຟຟ້າລາວ 01 ສະບັບ;
- ເກັບມ້ຽນສຳເນົາ 02 ສະບັບ.